## *ພະລາດຊະບັນຍັດຄົນພິການອາເມຣິກັນ (ADA)*

ຖ້າທ່ານຄິດວ່າຕົນເອງມີຄວາມພິການ ເຊິ່ງເປັນສິ່ງເຮັດໃຫ້ທ່ານບໍ່ບັນລຸໄດ້ຕາມເງື່ອນໄຂກຳນົດຂອງທາງກະຊວງ ຫຼື ການເຂົ້າເຖິງໂຄງການຂອງທາງກະຊວງ, ທ່ານອາດຈະມີສິດໄດ້ຮັບການຊ່ວຍເຫຼືອພາຍໃຕ້ພະລາດຊະບັນຍັດຄົນພິການອາເມຣິກັນ (ADA). ພາຍໃຕ້ ADA, ທ່ານສາມາດໄດ້ຮັບ "ຄ່າທີ່ພັກພາອາໃສຕາມສົມຄວນ" ຫຼືການຊ່ວຍເຫຼືອພິເສດຈາກທາງກົມ. ສອບຖາມຜູ້ຈັດການເລື່ອງຂອງທ່ານເພື່ອຂໍຂໍ້ມູນເພີ່ມເຕີມ. ທ່ານອາດຈະຍັງຈຳເປັນຕ້ອງຕິດຕໍ່ກັບທາງຫ້ອງການສິດທິພົນລະເມືອງ ແລະໂອກາດທີ່ເທົ່າທຽມກັນໃນດ້ານຄວາມຫຼາກຫຼາຍ ເພື່ອຂໍຄວາມຊ່ວຍເຫຼືອ.

## *ຄຳຖະແຫຼງການບໍ່ຈຳແນກຄວາມແຕກຕ່າງ*

ອີງຕາມກົດໝາຍຂອງລັດ, ຫ້າມບໍ່ໃຫ້ກະຊວງຈຳແນກຄວາມແຕກຕ່າງທາງດ້ານເຜົ່າພັນ, ສີຜິວ, ເຊື້ອຊາດ, ເພດ, ອາຍຸ, ຄວາມພິການ, ສາດສະໜາ ຫຼືຄວາມເຊື່ອທາງການເມືອງ.

**ເພື່ອຍື່ນຄຳຮ້ອງຟ້ອງໃນເລື່ອງການຈຳແນກຄວາມແຕກຕ່າງ, ທ່ານອາດຈະຕິດຕໍ່ຕາມທີ່ຢູ່ຕໍ່ໄປນີ້:**

*ສຳລັບຄຳຮ້ອງຟ້ອງກ່ຽວກັບ SNAP:*

U.S. Department of Agriculture (USDA)
Director, Office of Adjudication
1400 Independence Avenue, S.W.
Washington, D.C. 20250-9410
1-866-632-9992 (ໂທບໍ່ໄດ້ເສຍຄ່າ)
202-401-0216 (TDD)

*ສຳລັບຄຳຮ້ອງຟ້ອງກ່ຽວກັບ* ***TAFDC:***

U.S. Department of Health and
Human Services
Office of Civil Rights
JFK Federal Building – Room 1875
Boston, MA 02203
617-565-1340
617-565-1343 (TDD)
617-565-3809 (ແຟັກ)

ທ່ານອາດຈະສົ່ງອີເມລ໌ຄຳຮ້ອງຟ້ອງຂອງທ່ານຫາ : OCRcomplaint@hhs.gov.

**ນອກຈາກນັ້ນ, ຍັງຫ້າມບໍ່ໃຫ້ທາງກະຊວງຈຳແນກຄວາມແຕກຕ່າງບົນພື້ນຖານກ່ຽວກັບທາງເພດ.**

*ສຳລັບຄຳຮ້ອງຟ້ອງກ່ຽວກັບ DTA:*

Massachusetts Commission Against
Discrimination (MCAD)
One Ashburton Place
Sixth Floor, Room 601
Boston, MA 02108
ໂທລະສັບ: (617) 994-6000
TTY: (617) 994-6196

Department of Transitional Assistance
Office of Diversity, Equal Opportunity and
Civil Rights
600 Washington Street
Boston, MA 02111
617-348-8490 (ທາງສຽງ)
617-348-5532 (TTY)

**YRTK-LAOS (Rev. 6/2010)**
**18-132-0610-05**

dta

ລັດມາຊາຊູເຊັດ

ກະຊວງການຊ່ວຍເຫຼືອໄລຍະການຫັນປ່ຽນ

# ສິດຂອງທ່ານທີ່ຈະຕ້ອງຮູ້ຈັກ

ແຜ່ນພັບໃບນີ້ອະທິບາຍເຖິງສິດ ແລະຄວາມຮັບຜິດຊອບຂອງທ່ານ ຖ້າຫາກວ່າທ່ານໄດ້ຮັບຜົນປະໂຫຍດຈາກທາງກະຊວງ ລວມໄປເຖິງໄລຍະການຫັນປ່ຽນຢູ່ໃນຄອບຄົວຂອງທ່ານ ພ້ອມດ້ວຍບັນດາລູກທີ່ຂຶ້ນກັບທ່ານ (TAFDC), ການຊ່ວຍເຫຼືອສຸກເສີນກັບຜູ້ສູງອາຍຸ, ຄົນພິການ ແລະເດັກນ້ອຍ (EAEDC), ແລະ/ຫຼື ຜົນປະໂຫຍດຈາກໂຄງການຊ່ວຍເຫຼືອດ້ານອາຫານເສີມ (SNAP, ເມື່ອກ່ອນແມ່ນໂຄງການ Food Stamp). ກະລຸນາອ່ານໃຫ້ລະອຽດ. ທ່ານຕ້ອງອ່ານແຜ່ນພັບສະເພາະຂອງແຕ່ລະໂຄງການນຳອີກ ເພື່ອໃຫ້ຮູ້ຂໍ້ມູນອັນສຳຄັນ. ທ່ານມີຄວາມຮັບຜິດຊອບຕໍ່ການແຈ້ງໃຫ້ສະມາຊິກຄອບຄົວຂອງຕົນເອງຮູ້ກ່ຽວກັບກົດລະບຽບຂອງໂຄງການ ແລະກ່ຽວກັບສິດ ແລະຄວາມຮັບຜິດຊອບຂອງເຂົາເຈົ້າ. ຖ້າຫາກທ່ານບໍ່ເຂົ້າໃຈອັນໃດອັນນຶ່ງ, ຈົ່ງຂໍໃຫ້ຜູ້ຈັດການເລື່ອງຂອງທ່ານອະທິບາຍໃຫ້ຟັງ. ຖ້າທ່ານບໍ່ທັນໄດ້ຮັບສັນຊາດອາເມຣິກັນ, ຕ້ອງໃຫ້ແນ່ໃຈວ່າຜູ້ຈັດການເລື່ອງຂອງທ່ານໄດ້ແຈ້ງໃຫ້ທ່ານກ່ຽວກັບ "ສິ່ງທີ່ຜູ້ບໍ່ທັນໄດ້ສັນຊາດຕ້ອງຮູ້" ແລະແຜ່ນພັບກ່ຽວກັບ "ຜົນປະໂຫຍດຂອງຜູ້ທັນໄດ້ສັນຊາດ".

## *ຄວາມຮັບຜິດຊອບຂອງທ່ານ*

ຂຶ້ນຢູ່ກັບກົດລະບຽບຂອງໂຄງການທີ່ທ່ານເຂົ້າຮ່ວມຢູ່ເອງ, ທ່ານຕ້ອງ:

- ໃຫ້ຂໍ້ມູນທີ່ຖືກຕ້ອງ ແລະຄົບຖ້ວນສົມບູນກັບທາງກະຊວງ.
- ປະຕິບັດຕາມການນັດໝາຍຂອງທ່ານ. ຖ້າທ່ານຕ້ອງການໃຫ້ມີການກຳນົດເວລາທີ່ໄດ້ນັດໝາຍໄວ້ແລ້ວຄືນໃໝ່, ໃຫ້ຕິດຕໍ່ກັບຜູ້ຈັດການເລື່ອງຂອງທ່ານທັນທີທີ່ເປັນໄປໄດ້.
- ປະກອບເອກະສານການທວນຄືນຄວາມເປັນໄປໄດ້ຂອງກຳນົດເວລາຄືນໃໝ່ໃຫ້ຄົບຖ້ວນ (ທ່ານອາດຈະໄດ້ຮັບການຕິດຕໍ່ອີກເພື່ອຂໍຮູ້ເຫດຜົນອື່ນໆໃນເວລາໃດນຶ່ງກໍ່ໄດ້).
- ຮ່ວມມືກັບພະນັກງານລັດ ຜູ້ທີ່ອາດຈະມີຄວາມຈຳເປັນຕ້ອງທົບທວນເລື່ອງຂອງທ່ານຄືນເບິ່ງອີກ.
- ແຈ້ງໃຫ້ທາງກະຊວງຮູ້ກ່ຽວກັບການປ່ຽນແປງໃດນຶ່ງທີ່ອາດຈະສົ່ງຜົນກະທົບຕໍ່ກັບຜົນປະໂຫຍດຂອງທ່ານ, ໂດຍທີ່ບໍ່ໄດ້ຈຳກັດແຕ່ໃນເລື່ອງຕໍ່ໄປນີ້, ລວມມີ:
    - ⇒ ຈຳນວນຜູ້ທີ່ຢູ່ກັບທ່ານ;
    - ⇒ ບ່ອນທີ່ທ່ານຢູ່ (ທີ່ຢູ່ຂອງທ່ານ) ແລະຄ່າໃຊ້ຈ່າຍຄ່າທີ່ພັກ ແລະຄ່າໃຊ້ຈ່າຍດຳລົງຊີບອື່ນໆ (ລວມໄປເຖິງຂໍ້ທີ 8 ຫຼືໂຄງການຊົດເຊີຍອື່ນໆ);
    - ⇒ ຂອບເຂດການປະກັນໄພສຸຂະພາບຂອງທ່ານ (ຕົວຢ່າງ, ຖ້າທ່ານມີປະກັນໄພສຸຂະພາບໃໝ່ຜ່ານທາງບ່ອນເຮັດວຽກ ຫຼືພໍ່ແມ່ຜູ້ທີ່ບໍ່ມີໜ້າຢູ່, ຫຼືທ່ານເສຍປະກັນໄພສຸຂະພາບຂອງທ່ານໄປແລ້ວ);
    - ⇒ ຈຳນວນລາຍຮັບ, ຄ່າປະກັນສັງຄົມ, ເງິນສົດ ຫຼືການຊ່ວຍເຫຼືອລູກທີ່ທ່ານໄດ້ຮັບ; ຫຼື
    - ⇒ ເງິນອື່ນໆທີ່ທ່ານໄດ້ຮັບ ເຊັ່ນ: ຄ່າການສ້າງທີ່ຢູ່ອາໃສ, ຄ່າປະກັນສັງຄົມທີ່ໄດ້ຮັບຍ້ອນຫຼັງ, ຫຼືຖືກຫວຍ.

ທ່ານຕ້ອງລາຍງານເລື່ອງການປ່ຽນແປງເປັນລາຍລັກອັກສອນໃຫ້ກັບທາງກະຊວງໂດຍທາງໂທລະສັບ ຫຼືດ້ວຍຕົນເອງ ພາຍໃນ 10 ວັນຂອງການປ່ຽນແປງນັ້ນ. ຖ້າທ່ານບໍ່ລາຍງານເລື່ອງການປ່ຽນແປງນັ້ນ, ທ່ານອາດຈະເສຍຜົນປະໂຫຍດຂອງຕົນເອງ. ຖ້າທ່ານບໍ່ໝັ້ນໃຈວ່າທ່ານຕ້ອງລາຍງານຂໍ້ມູນຫຼືບໍ່ນັ້ນ, ໃຫ້ຖາມກັບຜູ້ຈັດການເລື່ອງຂອງທ່ານ ຫຼືໂທຫາ 1-800-445-6604.

**ຂຶ້ນຢູ່ກັບກົດລະບຽບຂອງໂຄງການ, ທ່ານຍັງຈຳເປັນຕ້ອງ**:

- ເຂົ້າຮ່ວມໂຄງການໃຫ້ການບໍລິການພະນັກງານຂອງກະຊວງ ຫຼືຊອກຫາວຽກເຮັດ; ແລະ
- ເຊັນໃບປົດປ່ອຍບັນທຶກທາງການແພດນຳ.

ຖ້າທ່ານກຳລັງຊອກຫາຜົນປະໂຫຍດທາງດ້ານທີ່ຢູ່ອາໃສ ຫຼືທີ່ພັກ, ໃຫ້ທ່ານຕິດຕໍ່ກັບກົມເຄຫະສະຖານ ແລະຊຸມຊົນ, ພະແນກຄວາມໝັ້ນຄົງທາງດ້ານເຄຫະສະຖານ ທີ່ໝາຍເລກ 1-877-418-3308 (ທາງສຽງ) ຫຼື 617-573-1140 (TTY).

## *ສິດທິຂອງທ່ານ*

ທ່ານມີສິດທີ່ຈະ:

- ໄດ້ຮັບການດູແລຢ່າງຮຽບຮ້ອຍ ແລະດ້ວຍຄວາມເຄົາລົບ;
- ຍື່ນໃບຄຳຮ້ອງ;
- ມີສິດຕໍ່ກັບຜົນປະໂຫຍດຕ່າງໆທີ່ໄດ້ກຳນົດໄວ້ຢ່າງທັນການ (ປົກກະຕິແລ້ວແມ່ນ 30 ວັນ);
- ໄດ້ຮັບແຈ້ງການຂອງກະຊວງໃນເລື່ອງການຕົກລົງກ່ຽວກັບຄຳຮ້ອງຂອງທ່ານ ແລະທຸກໆຄັ້ງທີ່ມີການປ່ຽນຕໍ່ເລື່ອງຂອງທ່ານ;
- ໄດ້ຮັບຜົນປະໂຫຍດຈາກມື້ທີ່ທ່ານຮ້ອງຂໍ, ຖ້າຄອບຄົວຂອງທ່ານມີສິດໄດ້ຮັບ;
- ມີຜູ້ແປພາສາທີ່ທາງກົມຈັດໃຫ້, ຖ້າຕ້ອງການ;
- ໄດ້ຮັບການຊ່ວຍເຫຼືອດ້ານອາຫານ ແລະການແພດທັນທີ, ຖ້າທ່ານມີສິດໄດ້ຮັບ;
- ໄດ້ຮັບການຊ່ວຍເຫຼືອກ່ຽວກັບຄວາມຮຸນແຮງຢູ່ໃນຄອບຄົວ;
- ມີສິດຍື່ນອຸທອນ ຖ້າທ່ານບໍ່ເຫັນດີກັບມາດຕະການໃດນຶ່ງທີ່ປະຕິບັດກັບເລື່ອງຂອງທ່ານ (ເພື່ອຂໍອຸທອນ, ໃຫ້ປະກອບແບບຟອມທີ່ຕິດຂັດມາໃນດ້ານຫຼັງຂອງແຈ້ງການທີ່ທ່ານໄດ້ຮັບມາຈາກກົມ; ຖ້າທ່ານເຮັດແຈ້ງການເສຍ, ໃຫ້ຕິດຕໍ່ກັບຜູ້ຈັດການເລື່ອງຂອງທ່ານ ເພື່ອຂໍແບບຟອມການອຸທອນໃໝ່);
- ທົບທວນເບິ່ງການຍື່ນຄຳຮ້ອງເລື່ອງຂອງທ່ານ;
- ມີຜູ້ຕາງໜ້າທີ່ໄດ້ຮັບການແຕ່ງຕັ້ງເພື່ອຊ່ວຍເຫຼືອທ່ານ; ແລະ
- ໄດ້ຮັບການດູແລເລື່ອງທີ່ພັກພາອາໃສຕາມສົມຄວນ (ໃຫ້ການຊ່ວຍເຫຼືອພິເສດ) ຖ້າທ່ານເປັນຄົນພິການ.

## *ວິທີການຮັບເອົາຜົນປະໂຫຍດຂອງທ່ານ*

ທ່ານຈະໄດ້ຮັບຜົນປະໂຫຍດດ້ວຍການໂອນເຂົ້າບັນຊີຂອງທ່ານໂດຍກົງ ຫຼືດ້ວຍການສົ່ງຜົນປະໂຫຍດໃຫ້ທາງເອເລັກໂທຣນິກ (EBT). ດ້ວຍການສົ່ງຜົນປະໂຫຍດໃຫ້ທາງ EBT, ທ່ານຈະສາມາດຖອນເອົາຜົນປະໂຫຍດຂອງທ່ານເປັນເງິນສົດໄດ້ຜ່ານທາງ ATMs (ເຄື່ອງຖອນເງິນ). ທ່ານສາມາດໃຊ້ເງິນສົດ ແລະ/ຫຼືຜົນປະໂຫຍດທີ່ເປັນ SNAP ໄດ້ຢູ່ທີ່ບ່ອນຈຸດເກັບເງິນ (POS) ຢູ່ໃນຊຸບເປີມາເກັດ ແລະຮ້ານອື່ນໆ. ທ່ານສາມາດໃຫ້ຜູ້ອື່ນໄປຮັບເອົາຜົນປະໂຫຍດແທນທ່ານກໍ່ໄດ້. ບຸກຄົນຜູ້ນີ້ຈະຖືວ່າເປັນຜູ້ຮັບເງິນ ຫຼືຜູ້ຕາງໜ້າມາຮັບເອົາຜົນປະໂຫດຂອງທ່ານທີ່ຖືກຕ້ອງ. ລົມກັບຜູ້ຈັດການເລື່ອງຂອງທ່ານກ່ຽວກັບທາງເລືອກນີ້. ຖ້າທ່ານມີບັນຊີທະນາຄານ, ທ່ານຈະໄດ້ຮັບຜົນປະໂຫຍດທີ່ເປັນເງິນສົດໂດຍການໂອນເຂົ້າບັນຊີໂດຍກົງ.

## *ການນຳໃຊ້ຂໍ້ມູນຂອງທ່ານ*

ທາງກົມອາດຈະຕິດຕໍ່ກັບບຸກຄົນອື່ນ ຫຼືໜ່ວຍງານອື່ນເພື່ອກວດກາເບິ່ງຂໍ້ມູນທີ່ທ່ານໄດ້ໃຫ້ມານັ້ນ. ຂໍ້ມູນທີ່ທ່ານໃຫ້ມາແມ່ນຈະໄດ້ໃຫ້ທາງໜ່ວຍງານທ້ອງຖິ່ນ, ລັດ, ແລະລັດຖະບານກາງເຮັດການພິສູດ ແລະຜ່ານລະບົບການຈັບຄູ່ເຂົ້າກັນທາງດ້ານຂໍ້ມູນຂອງລັດຖະບານ.





## *ໝາຍເລກປະກັນສັງຄົມ ແລະສິດຂອງທ່ານຕໍ່ຄວາມເປັນສ່ວນຕົວ*

ການສະໝັກຂອງສະມາຊິກຄົວເຮືອນເພື່ອຂໍຮັບການຊ່ວຍເຫຼືອນັ້ນ ແມ່ນຕ້ອງໄດ້ບອກໝາຍເລກປະກັນສັງຄົມໃຫ້ກັບທາງກະຊວງ. ຕົວເລກເຫຼົ່ານີ້ແມ່ນຈະຖືກພິສູດຄວາມຖືກຕ້ອງ. ຄົວເຮືອນທີ່ບໍ່ມີໝາຍເລກປະກັນສັງຄົມແມ່ນຈະຖືກສົ່ງໄປໃຫ້ກັບຫ້ອງການຄຸ້ມຄອງປະກັນສັງຄົມທ້ອງຖິ່ນ ເພື່ອສະໝັກຂໍເລກປະກັນສັງຄົມໃຫ້. ຜູ້ຈັດການເລື່ອງຂອງທ່ານຈະຊ່ວຍທ່ານໃນເລື່ອງນີ້.

ເມື່ອທ່ານເຊັນໃບຄຳຮ້ອງແລ້ວ, ທ່ານຈະອະນຸຍາດໃຫ້ທາງກະຊວງໃຊ້ໝາຍເລກປະກັນສັງຄົມຂອງທ່ານເພື່ອຕິດຕາມເລື່ອງຂອງທ່ານ ແລະເພື່ອປ້ອງກັນການໄດ້ຮັບຜົນປະໂຫຍດຊ້ຳຊ້ອນ.

ເພື່ອພິສູດຂໍ້ມູນທີ່ທ່ານໃຫ້, ທາງກະຊວງອາດຈະຈັບຄູ່ໝາຍເລກປະກັນສັງຄົມຂອງສະມາຊິກຄົວເຮືອນທຸກຄົນໃນເລື່ອງການບັນທຶກກ່ຽວກັບ:

- ໜ່ວຍງານລັດຖະບານ, ຂອງລັດ, ຂອງແຂວງ ຫຼືທ້ອງຖິ່ນ;
- ທະນາຄານ ຫຼືສະຖາບັນການເງິນອື່ນໆ;
- ຜູ້ໃຫ້ບໍລິການອື່ນໆຂອງກະຊວງ; ແລະ
- ໜ່ວຍງານ ຫຼືສະຖາບັນອື່ນໆທີ່ກົດໝາຍອະນຸຍາດໃຫ້

## *ຜູ້ທີ່ບໍ່ມີສັນຊາດສະຫະລັດ*

ເພື່ອໃຫ້ມີສິດໄດ້ຮັບຜົນປະໂຫຍດ TAFDC, EAEDC ຫຼື SNAP, ຜູ້ທີ່ບໍ່ມີສັນຊາດສະຫະລັດຈະຕ້ອງໄດ້ຮັບການພິສູດວ່າເຂົາເຈົ້າເຂົ້າມາຢູ່ໃນສະຫະລັດຢ່າງຖືກຕ້ອງຕາມກົດໝາຍ. ຖ້າທ່ານມີຄຳຖາມກ່ຽວກັບສະຖານະພາບການບໍ່ໄດ້ເປັນສັນຊາດຂອງສະຫະລັດ, ແມ່ນໃຫ້ຖາມເບິ່ງກັບຜູ້ຈັດການເລື່ອງຂອງທ່ານ.

ພາຍໃຕ້ກົດລະບຽບຂອງ TAFDC ແລະ SNAP, ຜູ້ທີ່ບໍ່ເປັນສັນຊາດສະຫະລັດຈະບໍ່ສາມາດ ຫຼືບໍ່ຢາກໃຫ້ຂໍ້ມູນກ່ຽວກັບສະຖານະພາບການເຂົ້າເມືອງຂອງຕົນເອງ ຫຼືໝາຍເລກປະກັນສັງຄົມເນື່ອງຈາກວ່າສະພາບການເຂົ້າເມືອງບໍ່ຕ້ອງການໃຫ້ເຮັດເຊັ່ນນັ້ນ. ເຖິງແນວໃດກໍ່ຕາມ, ຜູ້ທີ່ບໍ່ເປັນສັນຊາດຂອງສະຫະລັດນີ້ຈະ**ບໍ່**ມີສິດຕໍ່ກັບຜົນປະໂຫຍດ. ສະມາຊິກໃນຄົວເຮືອນຜູ້ອື່ນໆແມ່ນຍັງຈະໄດ້ຮັບຜົນປະໂຫຍດຄືເກົ່າ.

ຖ້າທ່ານເປັນສັນຊາດຂອງສະຫະລັດ, ທ່ານອາດຈະມີສິດຕໍ່ກັບຜົນປະໂຫຍດຂອງລັດຖະບານກາງເຊັ່ນ ລາຍຮັບປະກັນສັງຄົມເສີມ (SSI). ໂດຍທົ່ວໄປແລ້ວ, ທ່ານຈະຕ້ອງເຂົ້າມາຢູ່ເປັນການຖາວອນ 5 ປີ (ຖ້າແຕ່ງງານກັບພົນລະເມືອງສະຫະລັດແມ່ນ 3 ປີກໍ່ໄດ້) ກ່ອນທີ່ທ່ານຈະກາຍເປັນສັນຊາດຂອງສະຫະລັດ. ທ່ານສາມາດເຮັດການຮ້ອງຂໍໄດ້ຕັ້ງແຕ່ໃນຊ່ວງ 90 ວັນກ່ອນທີ່ທ່ານຈະຄົບຕາມກຳນົດ 5 ປີ. ທ່ານຈຳເປັນຕ້ອງສະແດງອອກໃຫ້ເຫັນວ່າທ່ານມີຄວາມຮູ້ພາສາອັງກິດ ແລະປະຫວັດສາດຂອງສະຫະລັດບາງດ້ານ ນອກຈາກວ່າທ່ານໄດ້ຮັບການຍົກເວັ້ນເນື່ອງຈາກທ່ານມີຄວາມພິການທາງດ້ານຮ່າງກາຍ ແລະມັນສະໝອງທີ່ເຮັດໃຫ້ທ່ານບໍ່ສາມາດຮຽນຮູ້ໄດ້. ໂດຍທົ່ວໄປແລ້ວ ແມ່ນມັນຈະໃຊ້ເວລາປະມານ 1 ປີ ສຳລັບທ່ານທີ່ດຳເນີນການຂໍ ແລະໄດ້ຮັບການສຳພາດເອົາສັນຊາດຂອງທ່ານ. ແຕ່ອາດຈະມີການກວດເບິ່ງປະຫວັດເພີ່ມເຕີມ ເນື່ອງຈາກເຫດຜົນການເພີ່ມຄວາມປອດໄພ ເຊິ່ງຈະເຮັດໃຫ້ມີການໃຊ້ເວລາດົນຂຶ້ນ.

ມັນເປັນສິ່ງທີ່ສຳຄັນເພື່ອໃຫ້ໄດ້ຮັບການຊ່ວຍເຫຼືອ<u>ກ່ອນ</u>ທີ່ທ່ານຈະສະໝັກຂໍສັນຊາດ. ຫ້ອງການຜູ້ລີ້ໄພ ແລະຜູ້ອົບພະຍົບ (ORI) ເຮັດວຽກຮ່ວມກັບເຄືອຂ່າຍຂອງອົງການຈັດຕັ້ງຊຸມຊົນຜູ້ທີ່ເຂົ້າຮ່ວມໂຄງການເຂົ້າເຖິງການເປັນສັນຊາດ. ອົງການຈັດຕັ້ງເຫຼົ່ານີ້ຈະຄັດເລືອກເບິ່ງການມີສິດທີ່ຈະໄດ້ຮັບສັນຊາດ, ໃຫ້ການຊ່ວຍເຫຼືອດ້ວຍຄວາມເປັນກາງ ແລະ/ຫຼືໃຫ້ການສົ່ງຕໍ່ໄປຫາບ່ອນອື່ນຕາມຄວາມເໝາະສົມ. ຜູ້ຈັດການເລື່ອງຂອງທ່ານຢູ່ໃນກະຊວງຊ່ວຍເຫຼືອດ້ານການຫັນປ່ຽນສາມາດຈັດຫາລາຍຊື່ຂອງອົງການຈັດຕັ້ງທີ່ສາມາດຊ່ວຍທ່ານໃນການສະໝັກຂໍສັນຊາດໄດ້.